ກລພ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

5061

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 5061 /ກປ

ນະຄອນຫຼວງວຽງຈັນ, ວັນທີ 18 OCT 2024

# ຄຳສັ່ງ

## ກ່ຽວກັບການສ້າງຂະບວນການສັກຢາກັນພະຍາດສັດ ປະຈຳປີ 2024 ເນື່ອງໃນໂອກາດ ວັນສັກຢາກັນພະຍາດສັດແຫ່ງຊາດ ວັນທີ 11 ພະຈິກ 2024

ເຖິງ: - ທ່ານ ຫົວໜ້າຫ້ອງການ, ບັນດາກົມ, ສະຖາບັນ ແລະ ສູນ ທີ່ຂຶ້ນກັບກະຊວງກະສິກຳ ແລະ ປ່າໄມ້;
- ທ່ານ ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ນະຄອນຫຼວງວຽງຈັນ.

– ອີງຕາມ ກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ) ສະບັບເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016;
– ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 603/ນຍ, ລົງວັນທີ 15 ຕຸລາ 2021;
– ອີງຕາມ ໜັງສືສະເໜີ ຂອງກົມລ້ຽງສັດ ແລະ ການປະມົງ ສະບັບເລກທີ 6029/ກລປ, ລົງວັນທີ 09 ຕຸລາ 2024;
– ອີງຕາມ ການຄົ້ນຄວ້າ ແລະ ສະເໜີ ຂອງຫ້ອງການ ສະບັບເລກທີ 4204/ຫກ, ລົງວັນທີ 17 ຕຸລາ 2024.

ໃນໄລຍະຜ່ານມາ, ການສັກຢາກັນພະຍາດສັດ ຖືເປັນມາດຕະການປ້ອງກັນທີ່ສຳຄັນ ແລະ ມີປະສິດທິຜົນດີທີ່ສຸດ ດັ່ງທິດນຳທີ່ວ່າ: "ຕ້ອງເອົາການພັດທະນາການລ້ຽງສັດ ໄປຄຽງຄູ່ກັບການສັດຕະວະແພດ, ຖືເອົາການກັນພະຍາດເປັນຕົ້ນຕໍ ເອົາການຄວບຄຸມ ແລະ ກຳຈັດພະຍາດເປັນສຳຄັນ"" ພ້ອມທັງກຳນົດເອົາວັນທີ 11 ພະຈິກ ເປັນວັນສັກຢາກັນພະຍາດສັດແຫ່ງຊາດ ໂດຍໄດ້ເລີ່ມຈັດຕັ້ງປະຕິບັດຕັ້ງແຕ່ປີ 2008 ເປັນຕົ້ນມາ, ເຮັດໃຫ້ການສັກຢາກັນພະຍາດສັດແຕ່ລະຊະນິດ ໄດ້ມີອັດຕາເພີ່ມຂຶ້ນຢ່າງຕໍ່ເນື່ອງ ເປັນຕົ້ນ ການສັກຢາກັນພະຍາດສັດລ້ຽງແບບເປັນຟາມ ບັນລຸໄດ້ເກືອບ 100%, ສັດລ້ຽງອ້ອມຊານເມືອງ ແລະ ເຂດຊົນນະບົດ ໄດ້ຫຼາຍກວ່າ 60% ແລະ ເຂດຫ່າງໄກສອກຫຼີກໄດ້ຫຼາຍກວ່າ 30% ໄດ້ເຮັດໃຫ້ສັດລ້ຽງ ມີພູມຄຸ້ມກັນຕ້ານຕໍ່ພະຍາດສັດ ຢູ່ໃນລະດັບທີ່ດີຂຶ້ນເປັນລຳດັບ, ການລ້ຽງສັດແຕ່ລະຊະນິດຂອງປະຊາຊົນ ມີການຂະຫຍາຍຕົວເພີ່ມຂຶ້ນຢ່າງສະໝ່ຳສະເໝີ; ແຕ່ເຖິງຢ່າງໃດກໍຕາມ, ພະຍາດສັດ ຍັງເກີດມີການລະບາດຂຶ້ນຢູ່ກັບສັດລ້ຽງທີ່ບໍ່ໄດ້ຮັບການສັກຢາປ້ອງກັນ ໂດຍສະເພາະໃນປີ 2024 ນີ້ ຍັງພົບເຫັນການລະບາດຂອງພະຍາດຢູ່ເປັນໄລຍະ ເຊັ່ນ: ພະຍາດອະຫິວາໝູອາຟຣິກາ, ເຕົ້າໂຮມເລືອດງົວ-ຄວາຍ, ພະ ຍາດໄຂ້ເລືອດດຳ ແລະ ພະຍາດສັດປີກ ແບບກະແຈກກະຈາຍຢູ່ທົ່ວປະເທດ, ສ້າງຜົນເສຍຫາຍໃຫ້ແກ່ການລ້ຽງສັດຂອງປະຊາຊົນ, ຜູ້ປະກອບການ ແລະ ລັດຖະບານຕ້ອງສູນເສຍງົບປະມານເຂົ້າໃນການເຝົ້າລະວັງ, ສະກັດກັ້ນ ແລະ ໂຕ້ຕອບພະຍາດທີ່ເກີດຂຶ້ນຢ່າງຫຼວງຫຼາຍ, ທັງເປັນສິ່ງກີດຂວາງທາງດ້ານການຄ້າຢູ່ພາຍໃນ ກໍຄືການສົ່ງອອກສັດ ແລະ ຜະລິດຕະພັນກ່ຽວກັບສັດ.

ເພື່ອເປັນການປ້ອງກັນສັດລ້ຽງບໍ່ໃຫ້ເປັນພະຍາດ ທັງເປັນການສືບຕໍ່ຍູ້ແຮງ ວຽກງານກັນພະຍາດສັດ ໃຫ້ແຂງແຮງກວ່າເກົ່າ ແນໃສ່ຫຼຸດຜ່ອນຄວາມສ່ຽງ ແລະ ຜົນກະທົບທີ່ອາດເກີດຂຶ້ນ ລວມທັງເປັນການປູກຈິດສໍານຶກ ແລະ ສ້າງຂະບວນການສັກຢາໃນທົ່ວປວງຊົນ ໃຫ້ກວ້າງຂວາງ ຟົດຟື້ນກວ່າປີທີ່ຜ່ານມາ

## ລັດຖະມົນຕີ ກະຊວງກະສິກໍາ ແລະ ປ່າໄມ້ ອອກຄໍາສັ່ງ:

1. ໃຫ້ ກົມລ້ຽງສັດ ແລະ ການປະມົງ ເປັນເຈົ້າການປະສານສົມທົບກັບ ພະແນກກະສິກໍາ ແລະ ປ່າໄມ້ແຂວງ ແລະ ນະຄອນຫຼວງວຽງຈັນ, ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ແລະ ຂະແໜງການທີ່ກ່ຽວຂ້ອງ ສືບຕໍ່ໂຄ ສະນາ ເຜີຍແຜ່ ກົດໝາຍ, ດໍາລັດ, ຄໍາສັ່ງ, ຂໍ້ຕົກລົງ ແລະ ແຈ້ງການຕ່າງໆ ທີ່ຕິດພັນກັບການລ້ຽງສັດ ແລະ ການ ສັດຕະວະແພດ ໃຫ້ແກ່ພະນັກງານ-ລັດຖະກອນ, ທະຫານ, ຕໍາຫຼວດ, ພໍ່ຄ້າ-ຊາວຂາຍ, ຊາວກະສິກອນ ຕະຫຼອດຮອດພໍ່ແມ່ປະຊາຊົນບັນດາເຜົ່າ ດ້ວຍຫຼາຍຮູບແບບ ເປັນຕົ້ນແມ່ນການໂຄສະນາຜ່ານສື່ມວນຊົນຕ່າງໆ ເຊັ່ນ: ໂທລະພາບ, ວິທະຍຸ, ຈັດກິດຈະກໍາຖາມ-ຕອບ, ສະແດງຮູບພາບ, ສາຍວີດີໂອ, ແຜ່ນພັບ ແລະ ປິດສະ ເຕີ້, ຈັດກອງປະຊຸມສໍາມະນາ, ປາຖະກະຖາ ໂດຍຍົກໃຫ້ເຫັນຄວາມສໍາຄັນ ຂອງການເຝົ້າລະວັງ, ປ້ອງກັນ ແລະ ຕ້ານພະຍາດສັດ ລວມທັງຄວາມເສຍຫາຍ ທີ່ເກີດຈາກການຖືເບົາຕໍ່ວຽກງານ ສັກຢາກັນພະຍາດສັດ ແລະ ຕັ້ງໜ້າປະຕິບັດ ຕາມທິດຊີ້ນໍາທີ່ວ່າ: "**ການກັນພະຍາດສັດ ເປັນໜ້າທີ່ຂອງທົ່ວປວງຊົນ**";
2. ໃຫ້ ພະແນກກະສິກໍາ ແລະ ປ່າໄມ້ແຂວງ ແລະ ນະຄອນຫຼວງວຽງຈັນ ຄົ້ນຄວ້າ ແລະ ນໍາສະເໜີ ເຈົ້າແຂວງ ແລະ ເຈົ້າຄອງນະຄອນຫຼວງວຽງຈັນ ແຕ່ງຕັ້ງຄະນະຮັບຜິດຊອບຊີ້ນໍາລວມ ຊຶ່ງປະກອບດ້ວຍ ທ່ານຮອງເຈົ້າ ແຂວງ, ຮອງເຈົ້າຄອງນະຄອນຫຼວງວຽງຈັນ ເປັນປະທານ, ບັນດາພະແນກການກ່ຽວຂ້ອງ ເປັນຄະນະ ເພື່ອເຮັດ ໜ້າທີ່ນໍາພາ-ຊີ້ນໍາຂະບວນການສັກຢາກັນພະຍາດສັດແຫ່ງຊາດ ຕະຫຼອດເດືອນພະຈິກ 2024 ນີ້ ໃຫ້ເປັນຂະ ບວນກວ້າງຂວາງ;
3. ໃຫ້ ຂຶ້ນແຜນຄວາມຕ້ອງການຢາກັນພະຍາດ ສໍາລັບມື້ເປີດຂະບວນການສັກຢາກັນພະຍາດສັດ ໃນວັນທີ 11 ພະຈິກ 2024 ແລ້ວສົ່ງໃຫ້ ກົມລ້ຽງສັດ ແລະ ການປະມົງ ເພື່ອຜະລິດ ແລະ ສະໜອງໃຫ້ຕາມຄວາມເໝາະ ສົມ. ສໍາລັບງົບປະມານຮັບໃຊ້ໃນການເຄື່ອນໄຫວການສ້າງຂະບວນການສັກຢາກັນພະຍາດສັດ ເປັນຕົ້ນແມ່ນ ງົບປະມານໃນການລົງເຄື່ອນໄຫວ, ຈັດຊື້ຢາກັນພະຍາດ ແລະ ອຸປະກອນຮັບໃຊ້ທີ່ຈໍາເປັນ ແມ່ນມອບໃຫ້ພະ ແນກກະສິກໍາ ແລະ ປ່າໄມ້ແຂວງ ແລະ ນະຄອນຫຼວງວຽງຈັນ ເປັນຜູ້ຮັບຜິດຊອບ ໂດຍປຸກລະດົມຂົນຂວາຍ ແລະ ຍາດແຍ່ງການຊ່ວຍເຫຼືອ ຈາກພາກສ່ວນກ່ຽວຂ້ອງ ພາຍໃນທ້ອງຖິ່ນຕົນ;
4. ໃຫ້ ຖືເອົາວັນສັກຢາກັນພະຍາດສັດແຫ່ງຊາດ ວັນທີ 11 ພະຈິກ ຂອງທຸກໆປີ ເປັນການປຸກລະດົມ, ສ້າງຈິດສໍາ ນຶກ ແລະ ກໍາລັງແຮງທົ່ວປວງຊົນ ເພື່ອປ້ອງກັນ ແລະ ເຝົ້າລະວັງ ບໍ່ໃຫ້ເກີດພະຍາດສັດ ໃນຝູງສັດລ້ຽງຂອງຕົນ, ຕິດພັນກັບການຍົກສູງສະຕິເປັນເຈົ້າ ໃນການປ້ອງກັນ ແລະ ຮັກສາສຸຂະພາບສັດລ້ຽງຂອງຕົນ ຕາມທິດນໍາ ທີ່ ວ່າ: "**ຖືເອົາການປ້ອງກັນເປັນຕົ້ນຕໍ ເອົາການປິ່ນປົວເປັນສໍາຄັນ**";
5. ສໍາລັບການຈັດພິທີ ເນື່ອງໃນວັນສັກຢາກັນພະຍາດສັດແຫ່ງຊາດ ວັນທີ 11 ພະຈິກ 2024 ນີ້ ຕ້ອງຮັບປະກັນ ເນື້ອໃນເປັນຕົ້ນຕໍ ແລະ ຮູບການເປັນສໍາຄັນ ບົນຈິດໃຈປະຢັດມັດທະຍັດ ແລະ ຕ້ານການຟູມເຟືອຍ. ສ່ວນ ທ້ອງຖິ່ນທີ່ມີເງື່ອນໄຂ ກໍໃຫ້ມີການແຂ່ງຂັນຈັດປະກວດສັດລ້ຽງປະເພດຕ່າງໆ ຕາມຄໍາຂວັນ ສັດພັນດີ, ສຸຂະ ພາບແຂງແຮງ ແລະ ມີຄວາມສົມບູນສວຍງາມ ເພື່ອເປັນການໂຄສະນາເຜີຍແຜ່ ການນໍາໃຊ້ແນວພັນສັດລ້ຽງທີ່ ດີ ແລະ ມີຄຸນນະພາບສູງ. ສ່ວນເຂດຈຸດສຸມພັດທະນາເຂດທີ່ກໍານົດຈະສ້າງເປັນເຂດປອດພະຍາດສັດ ແລະ ບ້ານຈຸດສຸມ 3 ສ້າງນັ້ນ ໃຫ້ເອົາໃຈໃສ່ປຸກລະດົມຊາວກະສິກອນ, ປະຊາຊົນ ເພື່ອໃຫ້ຄວາມຮ່ວມມື ແລະ ບໍລິ ການສັກຢາປ້ອງກັນ ໃຫ້ໄດ້ຫຼາຍກວ່າ 90% ຂອງຝູງສັດ ທັງນີ້ ກໍເພື່ອໃຫ້ກາຍເປັນຕົວແບບໃນການປ້ອງກັນ ແລະ ຮັກສາສຸຂະພາບສັດລ້ຽງ ໃຫ້ມີພູມຄຸ້ມກັນຕ້ານທານກັບພະຍາດລະບາດສັດສູງ;

6. ໃນຊ່ວງທ້າຍລະດູຝົນ ຫາ ຕົ້ນລະດູໜາວນີ້, ໃຫ້ ກົມລ້ຽງສັດ ແລະ ການປະມົງ ສົມທົບກັບ ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ນະຄອນຫຼວງວຽງຈັນ ເພີ່ມທະວີວຽກງານໂຄສະນາເຜີຍແຜ່, ແນະນຳ ຊຸກຍູ້ຊາວກະສິກອນຜູ້ລ້ຽງສັດ ປຸກສ້າງຄອກໃຫ້ສັດລ້ຽງຢ່າງເໝາະສົມ ເພື່ອຫຼີກລຽງຜົນກະທົບໂດຍກົງຈາກການປ່ຽນແປງຂອງດິນຟ້າອາກາດ, ເອົາໃຈໃສ່ໃຫ້ສັດລ້ຽງ ໄດ້ຮັບອາຫານພຽງພໍ, ຮູ້ຮັກສາສຸຂະພາບສັດລ້ຽງຂອງຕົນ, ປະຕິບັດມາດຕະການປ້ອງກັນຄວາມປອດໄພທາງດ້ານຊີວະພາບທີ່ດີ ເປັນຕົ້ນແມ່ນ ການລ້ຽງສັດໃຫຍ່, ໝູ ແລະ ສັດປີກ ໃຫ້ເອົາໃຈໃສ່ລ້ຽງຂັງໄວ້ໃນຄອກ, ບໍ່ປ່ອຍຊະຊາຍ, ມີການອະນາໄມຂ້າເຊື້ອຄອກ ແລະ ພື້ນທີ່ອ້ອມຮອບເປັນປະຈຳ. ອັນສຳຄັນ ແມ່ນການປູກຫຍ້າລ້ຽງສັດ, ເກັບຮັກສາເຟືອງ ແລະ ສິ່ງເສດເຫລືອຈາກການປູກຝັງ, ປຸງແຕ່ງກ້ອນແຮ່ທາດ-ອາຫານເສີມ ເພື່ອຮັບປະກັນໃຫ້ສັດລ້ຽງບໍ່ຂາດເຂີນອາຫານໃນລະດູແລ້ງ;
7. ໃນການຈັດຕັ້ງປະຕິບັດຕົວຈິງ ຖ້າຫາກມີຂໍ້ຫຍຸ້ງຍາກ ໃຫ້ລາຍງານກະຊວງກະສິກຳ ແລະ ປ່າໄມ້ ຮັບຊາບ ເປັນແຕ່ລະໄລຍະ ເພື່ອຫາວິທີການແກ້ໄຂ ຢ່າງທັນການ;
8. ຄຳສັ່ງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ຊທ. ລັດຖະມົນຕີ

**ບ່ອນນຳສົ່ງ:**

1.ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ 01 ສະບັບ (ເພື່ອໃຊ້ຕາງລາຍງານ);
2.ກະຊວງ ຖວທ 01 ສະບັບ (ເພື່ອຊ່ວຍອອກຂ່າວ);
3.ເກັບຮັກສາໄວ້ 01 ສະບັບ.

ກິແກ້ວ ສິງນາວົງ